Bureau of Planning and Sustainability
Innovation. Collaboration. Practical Solutions.

19 ເມສາ 2018

**ຂ່າວສານສຳຄັນ: ອັດຕາບໍລິການເກັບຂີ້ເຫຍື້ອ ແລະບໍລິການຣີໄຊເຄີລຂອງທ່ານໄດ້ຂຶ້ນລາຄາແລ້ວ**
**ເບິ່ງທີ່ເວັບໄຊ www.portlandoregon.gov/bps/garbagerates for details and translations.**

ເນື່ອງຈາກມີຄ່າໃຊ້ຈ່າຍເພີ່ມຂຶ້ນໃນການເຮັດທຸລະກິດສຳລັບບັນດາບໍລິສັດບໍລິການເກັບຂີ້ເຫຍື້ອແລະຣີໄຊເຄີລຂອງເມືອງພອທແລນດ໌,
**ໃບເກັບຄ່າບໍລິການເກັບຂີ້ເຫຍື້ອແລະຣີໄຊເຄີລສຳລັບຄົວເຮືອນໃນພອທແລນດ໌ໂດຍສະເຫຼັ່ຍແລ້ວຈະເພີ່ມຂຶ້ນປະມານບໍ່ເກີນ $2.55 ຕໍ່ເດືອນ ໂດຍເລີ່ມແຕ່ວັນທີ 1 ພຶດສະພາ 2018.**

ການຂຶ້ນອັດຕາລາຄາແມ່ນຈຳເປັນເພື່ອຊົດເຊີຍກັບຄ່າໃຊ້ຈ່າຍທີ່ສູງຂຶ້ນສຳລັບການຣີໄຊເຄີລ, ຄ່າແຮງງານ, ຄ່າເຊື້ອເພີງ ແລະການກຳຈັດຂີ້ເຫຍື້ອ. ໂດຍສະເພາະແມ່ນ ມາດຕະຖານໃໝ່ດ້ານຄຸນນະພາບສຳລັບວັດສະດຸທີ່ນຳໄປຣີໄຊເຄີລຊຶ່ງຂາຍໃຫ້ແກ່ບັນດາໂຮງງານຜູ້ຜະລິດສາກົນນັ້ນ ກຳນົດໃຫ້ສະຖານທີ່ຣີໄຊເຄີລໃນທ້ອງຖິ່ນຕ້ອງຈ້າງແຮງງານເພີ່ມເຕີມ.

ສະພາເມືອງພອທແລນດ໌ໄດ້ອະນຸມັດການຂຶ້ນອັດຕາເກັບຂີ້ເຫຍື້ອແລະການຣີໄຊເຄີລນີ້ຫຼັງຈາກທີ່ມີການກວດກາຄືນປະຈຳປີກ່ຽວກັບຄ່າໃຊ້ຈ່າຍໃນການເກັບຂີ້ເຫຍື້ອຈາກຖັງຂີ້ເຫຍື້ອນຳຂ້າງຖະໜົນ. ເມືອງພອທແລນດ໌ຈະປະເມີນຄືນໃໝ່ສຳລັບອັດຕາບໍລິການໃນລະດູໃບໄມ້ປົ່ງ 2019.

ພວກເຮົາຮູ້ວ່າ ຊາວເມືອງພອທແລນດ໌ຮູ້ສຶກເຖິງຜົນກະທົບຂອງການຂຶ້ນລາຄາ. ດ້ວຍການຊ່ວຍເຫຼືອຂອງພວກທ່ານ, ພວກເຮົາຈຶ່ງສາມາດຫຼຸດອັດຕາລາຄາ ຫຼື ຮັກສາລະດັບອັດຕາໃຫ້ຄົງທີ່ໄດ້ໃນລະຍະຫ້າປີຜ່ານມາ.

**ມີຄຳຖາມບໍ່?**
**ໂທຣຕິດຕໍ່ບໍລິສັດເກັບຂີ້ເຫຍື້ອແລະຣີໄຊເຄີລຂອງທ່ານ ຫຼື ຕິດຕໍ່ຫ້ອງການວາງແຜນແລະຄວາມຍັ້ງຍືນຂອງເມືອງພອທແລນດ໌ (City of Portland Bureau of Planning and Sustainability) ທີ່ເບີໂທຣ 503-823-7202.**

**ເຕືອນຄວາມຈຳ**

- ຢັ້ງມຊົມເວັບໄຊ www.garbagedayreminders.com ເພື່ອຊອກຫາບໍລິສັດຂອງທ່ານ, ກວດກາເບິ່ງຕາຕະລາງເກັບຂີ້ເຫຍື້ອຂອງທ່ານ ແລະລົງຊື່ສະໝັກຮັບບໍລິການເຕືອນຄວາມຈຳປະຈຳອາທິດ.
- ເຈົ້າຂອງຊັບສິນປະເພດອາຄານບ້ານເຊົ່າ (1-4 ຫ້ອງ) ຈຳເປັນຕ້ອງຈັດຕັ້ງແລະຈ່າຍຄ່າບໍລິການສຳລັບຜູ້ເຊົ່າ.

The Bureau of Planning and Sustainability is committed to providing meaningful access. For accommodations, modifications, translation, interpretation or other services, please contact at 503-823-7700 or use City TTY 503-823-6868, or Oregon Relay Service 711.

Traducción o interpretación | Chuyển Ngữ hoặc Phiên Dịch | 翻译或传译 | Письменный или устный перевод | Traducere sau Interpretare
الترجمة التحريرية أو الشفهية | Письмовий або усний переклад | 翻訳または通訳 | Turjumida ama Fasiraadda | ການແປພາສາ ຫຼື ການອະທິບາຍ
503-823-7700 | www.portlandoregon.gov/bps/71701

City of Portland, Oregon | Bureau of Planning and Sustainability | www.portlandoregon.gov/bps
1900 SW 4th Avenue, Suite 7100, Portland, OR 97201 | phone: 503-823-7700 | fax: 503-823-7800 | tty: 503-823-6868

*Printed on 100% post-consumer waste recycled paper.*

ການບໍລິການມາດຕະຖານ ລວມມີ ການຣີໄຊເຄີລປະຈໍາອາທິດ, ການນໍາໄປເຮັດປຸ໋ຍປະຈໍາອາທິດ ແລະການເກັບຂີ້ເຫຍື້ອທົ່ວໄປອາທິດເວັ້ນອາທິດ.

ອັດຕາຂີ້ເຫຍື້ອໃນຄົວເຮືອນຂອງພອທແລນດ໌

| | | |
|---|---|---|
| ຖັງຂະໜາດ 20 ແກລລອນ* | 35 ປອນດ໌ | $27.15 |
| ຖັງແບບມິນິ ຂະໜາດ 20 ແກລລອນ | 60 ປອນດ໌ | $27.15 |
| ຖັງຂະໜາດ 32 ແກລລອນ* | 55 ປອນດ໌ | $31.80 |
| ຖັງແບບມິນິ ຂະໜາດ 35 ແກລລອນ | 85 ປອນດ໌ | $31.80 |
| ຖັງແບບມິນິ ຂະໜາດ 60 ແກລລອນ | 135 ປອນດ໌ | $37.65 |
| ຖັງແບບມິນິ ຂະໜາດ 90 ແກລລອນ | 175 ປອນດ໌ | $44.15 |
| ຖັງຂະໜາດ 32 ແກລລອນ ເກັບທຸກສີ່ອາທິດ | 55 ປອນດ໌ | $24.25 |
| ຖັງແບບມິນິ ຂະໜາດ 35 ແກລລອນ ເກັບທຸກສີ່ອາທິດ | 85 ປອນດ໌ | $24.25 |
| ສໍາລັບການຣີໄຊເຄີລ ແລະການນໍາໄປເຮັດປຸ໋ຍ ເທົ່ານັ້ນ** | -- | $20.85 |

ອັດຕາຄ່າເກັບຂີ້ເຫຍື້ອເຂດພອທແລນດ໌ ດ້ານຕາເວັນຕົກ

| | | |
|---|---|---|
| ຖັງຂະໜາດ 20 ແກລລອນ* | 35 ປອນດ໌ | $31.35 |
| ຖັງແບບມິນິ ຂະໜາດ 20 ແກລລອນ | 60 ປອນດ໌ | $31.35 |
| ຖັງຂະໜາດ 32 ແກລລອນ* | 55 ປອນດ໌ | $36.00 |
| ຖັງແບບມິນິ ຂະໜາດ 35 ແກລລອນ | 85 ປອນດ໌ | $36.00 |
| ຖັງແບບມິນິ ຂະໜາດ 60 ແກລລອນ | 135 ປອນດ໌ | $41.85 |
| ຖັງແບບມິນິ ຂະໜາດ 90 ແກລລອນ | 175 ປອນດ໌ | $48.35 |
| ຖັງຂະໜາດ 32 ແກລລອນ ເກັບທຸກສີ່ອາທິດ | 55 ປອນດ໌ | $27.15 |
| ຖັງແບບມິນິ ຂະໜາດ 35 ແກລລອນ ເກັບທຸກສີ່ອາທິດ | 85 ປອນດ໌ | $27.15 |
| ສໍາລັບການຣີໄຊເຄີລ ແລະການນໍາໄປເຮັດປຸ໋ຍ ເທົ່ານັ້ນ** | -- | $23.60 |

*ເພື່ອຄວາມປອດໄພແລະສຸຂະພາບຂອງຄົນຂັບຣົຖ, ລະດັບການບໍລິການເຫຼົ່ານີ້ກໍາລັງໝົດ ແລະມີໃຫ້ສະເພາະລູກຄ້າທີ່ລົງຊື່ຮັບບໍລິການນີ້ໃນປັດຈຸບັນເທົ່ານັ້ນ.

**ບໍ່ລວມການເກັບຂີ້ເຫຍື້ອຕາມປົກກະຕິ.
ບັນດາລູກຄ້າທີ່ຮັບບໍລິການນີ້ສາມາດໂທຣຫາບໍລິສັດເກັບຂີ້ເຫຍື້ອແລະຣີໄຊເຄີລ ເພື່ອຈັດຕາຕະລາງນັດໝາຍການເກັບຂີ້ເຫຍື້ອຕາມໂອກາດເປັນຄັ້ງຄາວໃນລາຄາ $9.75 ຕໍ່ຄັ້ງ ຫຼື $10.55 ຕໍ່ຄັ້ງ ໃນເຂດຕາເວັນຕົກ.